Laotian American National Alliance, Inc.

IT'S IN OUR HANDS

# ການສຳຣວດສຳມະໂນຄົວປີ 2010 ຢູ່ໃນກຳມືພວກເຮົາ

## ຄຳແນະນຳກ່ຽວກັບການສຳຣວດສຳມະໂນຄົວ

ນັບທຸກໆຄົນເທື່ອນຶ່ງ ..... ແລະນັບຄັ້ງດຽວພຽງເທົ່ານັ້ນ ...... ແລະນັບໃຫ້ຖືກທີ່

ພື້ນຖານປະຊາທິປະໄຕຂອງຊາວອາເມຣິກັນພວກເຮົາ ແມ່ນອາສັຍຄວາມສເມີພາບ ແລະ ຄວາມຍຸຕິທັມເປັນຫລັກເພື່ອຕາງໜ້າໃຫ້ພວກເຮົາຢູ່ໃນສະພາ. ເພື່ອໃຫ້ບັນລຸເປົ້າໝາຍອັນແນ່ນອນໃນການປະເມີນຈຳນວນແລະທີ່ຢູ່ອາສັຍຂອງປະຊາຊົນພາຽໃນປະເທດ, ກົດຣັຖທັມມູນຂອງສະຫະຣັຖໄດ້ບົ່ງໄວ້ວ່າ ຕ້ອງມີການສຳຣວດສຳມະໂນຄົວຂອງປະຊາກອນທຸກໆ 10 ປີ.

ຈຳນວນສຳມະໂນຄົວຂອງພົລເມືອງທັງໝົດຈະເປັນເຄື່ອງຊີ້ແນະວ່າຣັຖໃດຄວນໄດ້ເພີ້ມຂຶ້ນຫລືຫລຸດຈຳນວນຜູ້ຕາງໜ້າໃນສະພາລົງ. ພ້ອມດຽວກັນນີ້ ຍັງຈະໄດ້ໃຊ້ໃນການພິຈາຣະນາເພື່ອແບ່ງປັນເງິນງົບປະມານຂອງຣັຖບານກາງໃຫ້ແຕ່ລະຣັຖ ແລະ ເງິນຊ່ວຍເຫລືອດ້ານບໍຣິການຊຸມຊົນຕ່າງໆໃນຊ່ວງສິບປີ. ການສຳຣວດສຳມະໂນຄົວປີ 2010 ນີ້ຈະມີຜົລກະທົບໂດຽກົງຕໍ່ການແບ່ງສັນປັນສ່ວນເງິນງົບປະມານຈຳນວນ 400 ພັນລ້ານດອລລ່າໃຫ້ແກ່ຣັຖບານທ້ອງຖິ່ນ,ໃຫ້ແຕ່ລະຣັຖ ແລະໃຫ້ຣັຖບານຂອງຊົນເຜົ່າຕ່າງໆໃນຊ່ວງ 10 ປີຂ້າງໜ້າ.

ເພື່ອເຮັດໃຫ້ການແບ່ງປັນງົບປະມານດັ່ງກ່າວນີ້ໄດ້ບັນລຸຜົລຢ່າງແມ່ນຢໍາແລະໂປ່ງໃສ, ເປົ້າໝາຍໃນການສຳຣວດສຳມະໂນຄົວໃນຊ່ວງສິບປີນີ້ກໍຄື ຕ້ອງນັບທຸກໆຄົນ,ໃຫ້ນັບພຽງເທື່ອດຽວເທົ່ານັ້ນ ແລະ ຕ້ອງນັບໃຫ້ຖືກທີ່. ຂໍ້ມູນທີ່ເກັບກຳມາໄດ້ຈາກການສຳຣວດສຳມະໂນຄົວໃນຄັ້ງນີ້ ຍັງຈະເປັນເຄື່ອງຊ່ວຍລົງຄວາມເຫັນໃນການໃຫ້ຄວາມຊ່ວຍເຫລືອດ້ານສາທາຣະນະສຸຂ, ການປັບປຸງໝູ່ບ້ານ, ການອົນສົ່ງ, ການສຶກສາ, ການບໍຣິການຜູ້ອາວຸໂສ ແລະ ການຊ່ວຍເຫລືອອື່ນໆອີກມາກມາຍ.

### ການເຂົ້າເຖິງປະຊາກອນຫລາຍເຊື້ອຊາດທີ່ກຳລັງເພີ້ມຈຳນວນຂຶ້ນ

ເປົ້າໝາຍຂອງການສຳຣວດສຳມະໂນຄົວປີ 2010 ນີ້ກໍຄື ຕ້ອງນັບປະຊາຊົນທຸກໆຄົນທີ່ອາສັຍຢູ່ພາຍໃນສະຫະຣັຖໃນວັນທີ 1 ເມສາ 2010. ເຈົ້າໜ້າທີ່ສຳຣວດສຳມະໂນຄົວຈະບໍ່ສອບຖາມເຖິງຖານະດ້ານກົດໝາຍຂອງປະຊາຊົນຄົນໃດທັງສິ້ນ ບໍ່ວ່າຈະຢູ່ໃນຊ່ວງສຳຣວດຫລືຈະຢູ່ໃນຊ່ວງໝາຍກຳນົດການໃດໆກໍຕາມ.

### ການນັບຕົວຂອງທ່ານຄືອະນາຄົດຂອງພວກເຮົາ

Laotian American National Alliance, Inc.

IT'S IN OUR HANDS

# An Introduction to the 2010 Census

### Counting Everyone Once — and Only Once — and In the Right Place

The foundation of our American democracy is dependent on fair and equitable representation in Congress. In order to achieve an accurate assessment of the number and location of the people living within the nation's borders, the U.S. Constitution mandates a census of the population every 10 years.

The census population totals determine which states gain or lose representation in Congress. It also determines the amount of state and federal funding communities receive over the course of the decade. 2010 Census data will directly affect how more than $3 trillion is allocated to local, state and tribal governments over the next 10 years. In order for this funding allocation to be accomplished fairly and accurately, the goal of the decennial census is to count everybody, count them only once, and count them in the right place. The facts gathered in the census also help shape decisions for the rest of the decade about public health, neighborhood improvements, transportation, education, senior services and much more.

## Reaching an Increasingly Diverse Population

The goal of the 2010 Census is to count all residents living in the United States on April 1, 2010. The U.S. Census Bureau does not ask about the legal status of respondents in any of its surveys and census programs.

## Your count is our future.